## ການບ້ານບົດທີ 4 ພາກຕົ້ນ

# ໂປໂລໄປໂຮງທຳໃນເມືອງເທຊະໂລນິກ

(ກຈກ 17:1-4)

- *ໃຫ້ອ່ານ ກຈກ 17:1-4 ກ່ອນ. (ແລ້ວເອົາເຈ້ຍຂັ້ນໃນໜ້ານັ້ນໄວ້)*
- *ແລ້ວກວດເບິ່ງແຜນທີ່ຕໍ່ໄປນີ້.*




**1** ກ. ໃນບົດຮຽນທີ່ຜ່ານມາເຮົາຮຽນແລ້ວວ່າ ໂປໂລແລະໝູ່ລົງເຮືອຈາກເມືອງໃດ?
(ອັກສອນ “ມ” ໃນແຜນທີ່) ______________________________

ຂ. ມາເຖິງເມືອງໃດ? (ອັກສອນ “ວ” ໃນແຜນທີ່) ______________________

*ໃນເມື່ອນັ້ນ ມີ 4 ຄົນເດີນທາງໄປນຳກັນຄື: ໂປໂລ ຊີລາ ຕີໂມທຽວ ແລະລູກາ*

**2** ແຕ່ມີສອງຄົນເດີນທາງຕໍ່ໄປເມືອງເທຊະໂລນິກ ຄືສອງຄົນໃດ? (ກຈກ 17:1)

______________________________________________

**3** ສອງຄົນໃດຍັງຢູ່ໃນຟີລິບປອຍເພື່ອສອນຄົນທີ່ເຊື່ອໃໝ່? __________________

**4** ກ. ຄິດວ່າແມ່ນໃຜເປັນຜູ້ຂຽນພະທຳກິດຈະການ? ____________________

ຂ. ຖ້າເຫັນຄຳວ່າ “ພວກເຮົາ” ກໍຖືວ່າໃຜເດີນທາງຮ່ວມກັບໂປໂລແລະໝູ່? ________

ຄ. ຖ້າເຫັນຄຳວ່າ “ພວກເຂົາ” ຫຼື “ທ່ານເຫຼົ່ານັ້ນ” ຖືວ່າຢ່າງໃດກ່ຽວກັບລູກາ? _______

______________________________________________

ງ. ດັ່ງນັ້ນເບິ່ງຄືລູກາໄປເທຊະໂລນິກກັບໂປໂລຫຼືຍັງຢູ່ສອນຄູິດສະຕຽນໃນເມືອງຟີລິບປອຍ?

______________________________________________

**5** ກ. ໂປໂລແລະຊີລາຜ່ານສອງເມືອງໃດ? (ກຈກ 17:1) ________________________

________________________________________________________________

ຂ. ແລ້ວມາເຖິງເມືອງໃດ? (ອັກສອນ "ຫ" ໃນແຜ່ນທີ່) ________________________

**6** ກ. ຈາກຟີລິບປອຍໄປເທຊະໂລນິກ
ມີຈັກຫຼັກ? (ເບິ່ງຮູບຂ້າງຂວານີ້)

__________________

ຂ. ຟີລິບປອຍແລະເທຊະໂລນິກ
ຢູ່ໃນແຂວງດຽວ
ຄືແຂວງໃດ?

__________________




**7** ກ. ໂປໂລໄປຫາເຂົາຢູ່ໃນບ່ອນໃດ? (ກຈກ 17:2) ____________________________

ຂ. ໄປຮ່ວມກັບເຂົາໃນວັນຊະບາໂຕ (ວັນເສົາ) ຈັກອາທິດ? ______________________

ຄ. ໂປໂລອ້າງຂໍ້ຄວາມໃດໂຕ້ຕອບກັບເຂົາ? __________________________________

**8** ໂປໂລຊີ້ແຈງໃຫ້ເຂົາເຫັນວ່າ ໃຜເປັນພະຄຼິດ (ພະເມຊີອາ)? ______________________

**9** ໂປໂລຢູ່ໃນເມືອງໂກລິນໂທເວລາຂຽນຈົດໝາຍເຖິງຄຼິດສະຕະຈັກເທຊະໂລນິກ. ໃນແຜນ
ທີ່ໜ້າ 42 ໂກລິນໂທໝາຍໄວ້ດ້ວຍຕົວອັກສອນໃດ? __________________________

**10** ໃຫ້ອ່ານ 1 ທຊນ 2:2

ກ. ກ່ອນຈະມາເທດສະໜາໃນເມືອງເທຊະໂລນິກນີ້ ເຂົາທົນການລຳບາກຢ່າງໃດໃນເມືອງ
ຟີລິບ ປອຍ? ________________________________________________

ຂ. ແຕ່ເຂົາຍັງມີໃຈກ້າໃນພະເຈົ້າເພື່ອປະກາດຫຍັງ? __________________________

ຄ. ປະກາດແກ່ໃຜ? ________________________________________________

| ໃຫ້ຝຶກໃນການຊອກຫາ ພະທຳເທຊະໂລນິກທີໜຶ່ງແລະທີສອງໃນພະຄຳພີ. |
|---|

**11** ກ. ຕາມໃນ 1 ທຊນ 2:2 ນັ້ນພວກໂປໂລເດີນທາງຈາກໃສໄປເທຊະໂລນິກ? __________

ຂ. ໃນພະທຳກິດຈະການ ລູກາກໍລາຍງານວ່າ ໂປໂລແລະຊີລາ ລາຈາກເຮືອນນາງລີເດຍໃນ
ເມືອງ ໃດໄປເຖິງເມືອງເທຊະໂລນິກ? ________________________________

**12** ທວນຄືນ: ໂປໂລຂຽນພະທຳເທຊະໂລນິກທີໜຶ່ງແລະທີສອງຈາກໃສ? ______________

**13** ໃນເມືອງເທຊະໂລນິກ ມີຄົນຢິວບາງຄົນທີ່ຍອມເຊື່ອແລະມີຊາດໃດອີກ? (ກຈກ 17:4) ___

**14** ໃນກຈກ 20:4 ເຫັນຊື່ສອງຄົນຈາກເທຊະໂລນິກທີ່ໄປກັບໂປໂລ ຜູ້ໜຶ່ງນັ້ນຊື່ຊະກຸນໂດ. ອີກ
ຄົນໜຶ່ງ ຊື່ຫຍັງ? ________________________________________________

**15** ໃນ 1 ທຊນ 1:5 ເຫັນວ່າໂປໂລປະກາດພະທຳໂດຍລິດອຳນາດໃດ? ________________

**16** ຊະກຸນໂດແລະອາລິດຕາໂຂພ້ອມກັບຄົນອື່ນ ໆ ໃນຄຼິດສະຕະຈັກເທຊະໂລນິກ ຖືວ່າຄຳເທດ
ສະໜາ ນັ້ນບໍ່ແມ່ນຄວາມຂອງມະນຸດ ແຕ່ເປັນພະທຳຂອງໃຜ? (1 ທຊນ 2:13) ________

**17** ອາລິດຕາໂຂນັ້ນ ກາຍເປັນຜູ້ຮ່ວມງານຂອງໂປໂລທີ່ສຳຄັນ.

ກ. ໃນ ກຈກ 19:29 ຝູງຊົນຈັບເອົາໃຜ? ____________________________________

ຂ. ໃນເມືອງໃດ? (ເບິ່ງຫົວເລື່ອງກ່ອນຂໍ້ 23) __________________________________

**18** ເມື່ອໂປໂລເດີນທາງເອົາຄວາມຊ່ວຍເຫຼືອໃຫ້ແກ່ຄົນຍາກຈົນໃນກຸງເຢລູຊາເລັມ ເຫັນວ່າມີໄທ
ເມືອງເທຊະໂລນິກໄປນຳສອງຄົນຄືໃຜ? (ກຈກ 20:4) __________________________

**19** ກ. ເມື່ອເຂົາເອົາໂປໂລໄປກຸງໂລມເປັນນັກໂທດ ມີຜູ້ໃດໄປພ້ອມກັບໂປໂລ? (ກຈກ 27:2)

______________________________________________________________

ຂ. ໃນຂໍ້ດຽວນັ້ນເຫັນຄຳວ່າ “ພວກເຮົາ” ສະແດງວ່າຜູ້ຂຽນໄປນຳ.
ຜູ້ຂຽນທີ່ໄປນຳນັ້ນຄືໃຜ? __________________________________________

ຄ. ເຂົາຖືກອຸບັດຕິເຫດຢ່າງໃດ? (ກຈກ 27:41) _______________________________

ງ. ແຕກຢູ່ເກາະໃດ? (ກຈກ 28:1) _____________________________________

**20** ກ. ສຸດທ້າຍ ເມື່ອໂປໂລຖືກຈຳຄຸກໄວ້ແລ້ວ ເຫັນວ່າຍັງມີ 4 ຄົນໃດເປັນເພື່ອນຮ່ວມງານ?
(ຟີເລໂມນ ຂໍ້ 24 ໜ້າ 626 ໃນພະຄຳພີໃໝ່)

______________________________________________________________

ຂ. ໃນ ໂກໂລຊາຍ 4:10 ເຫັນວ່າມີໃຜທີ່ຖືກຄຸມຂັງໄວ້ຮ່ວມກັບໂປໂລ? ______________

______________________________________________________________

**21** ເຮົາຮຽນມາແລ້ວເລື່ອງເຫດການ 4 ປະການໃນເມື່ອອາລິດຕາໂຂຢູ່ກັບໂປໂລ. ຈົ່ງຕອບຄຳ
ຖາມ ໃຫ້ຖືກກັບຮູບ 4 ໃບ.

1


2


3


4


ກ. ຮູບໃດສະແດງເຖິງເມື່ອຝູງຊົນຈະຈັບເຂົາໃນເມືອງເອເຟໂຊ? ___________________

ຂ. ຮູບໃດສະແດງເຖິງເຂົາເອົາຄວາມຊ່ວຍເຫຼືອໃຫ້ພີ່ນ້ອງໃນກຸງເຢລູຊາເລັມ? __________

ຄ. ຮູບໃດສະແດງເຖິງເມື່ອເຮືອແຕກເສຍຢູ່ເກາະເມລິເຕ? ________________________

ງ. ຮູບໃດສະແດງເຖິງທີ່ອາລິດຕາໂຂຖືກຂັງໄວ້ໃນຄຸກພ້ອມກັບໂປໂລ? ______________

**22** ໂປໂລຕັ້ງຄຼິດສະຕະຈັກໃນແຂວງມາເກໂດເນຍສອງບ່ອນ ຄືສອງບ່ອນໃດກ່ອນ?

________________________________________________________________

*ທັງສອງຄຼິດສະຕະຈັກນັ້ນ ມີສ່ວນສຳຄັນໃນການປ່າວປະກາດຕໍ່ຂອງໂປໂລ*

*ຈົ່ງຮັບພິຈາລະນາແລະອ້ອນວອນ*

- *ໃຫ້ອ່ານຕະຫຼອດ 1 ເທຊະໂລນິກ ບົດທີ 1 ແລະບົດທີ 2 ເຖິງຂໍ້ 2 ກ່ອນ*
  - *ໃຫ້ສັງເກດພົນຮັບຂອງຄຳສອນຂອງໂປໂລໃນຊີວິດຂອງໄທເມືອງເທຊະໂລນິກ.*
  - *ໂປໂລຊົມເຊີຍຄຼິດສະຕະຈັກໃນເມືອງເທຊະໂລນິກຫຼາຍ. ອາລິດຕາໂຂ ຈາກຄຼິດສະຕະຈັກນັ້ນ ເປັນຕົວຢ່າງດີໃນປະການໃດແດ່?*
  - *ທ່ານເອງເດ ຕັ້ງແຕ່ຮັບເຊື່ອເປັນຄຼິດສະຕຽນ ຊີວິດຂອງທ່ານເປັນຕາຊົມເຊີຍຢ່າງຄຼິດສະຕຽນ ໃນເມືອງເທຊະໂລນິກບໍ່? ໃຫ້ອ້ອນວອນເລື່ອງນີ້!*

*ໃຫ້ທວນຄືນແລ້ວຕອບບົດເສັງ!*

ຄຳຕອບ:

1 *ກ. ໄທອາດ ຂ. ຟີລິບປອຍ*

2 *ໂປໂລ ແລະ ຊີລາ*

3 *ຕີໂມທຽວ ແລະ ລູກາ*

4 *ກ. ລູກາ ຂ. ລູກາຢູ່ຮ່ວມ ຄ. ລູກາບໍ່ຢູ່ນຳເຂົາເວລານັ້ນ ງ. ຍັງຢູ່ຟີລິບປອຍ*

5 *ກ. ອຳຟີໂປລີ ແລະ ອາໂປໂລນີ ຂ. ເທເຊະໂລນິກ*

6 *ກ. 160 ຫຼັກ ຂ. ມາເກໂດເນຍ*

7 *ກ. ໂຮງທຳ ຂ. 3 ອາທິດ ຄ. ຂໍ້ຄວາມໃນພະຄຳພີ*

8 *ພະເຢຊູ*

9 *ຕົວອັກສອນ "ລ".*

10 *ກ. ການປະຈານຂາຍໜ້າ ຂ. ຂ່າວປະເສີດເລື່ອງພະເຢຊູ*
*ຄ. ພວກເຂົາ (ໃນເມືອງເທຊະໂລນິກ)*

11 *ກ. ຈາກຟີລິບປອຍ ຂ. ຈາກຟີລິບປອຍ*

12 *ຈາກໂກລິນໂທ*

13 *ຊາດກະລັກ*

14 *ອາລິດຕາໂຂ*

15 *ພະວິນຍານບໍລິສຸດ*

16 *ຂອງພະເຈົ້າ*

17 *ກ. ຄາໂຍ ແລະ ອາລິດຕາໂຂ ຂ. ເມືອງເອເຟໂຊ*

18 *ອາລິດຕາໂຂກັບຊະກຸນໂດ.*

19 *ກ. ອາລິດຕາໂຂ ຂ. ລູກາ ຄ. ເຮືອແຕກເສຍຫາຍ. ງ. ເກາະເມລິເຕ*

20 *ກ. ມາລະໂກ ອາລິດຕາໂຂ ເດມາ ແລະ ລູກາ ຂ. ອາລິດຕາໂຂ*

21 *ກ. (1) ຂ. (2) ຄ. (3) ງ. (4)*

22 *ຟີລິບປອຍ ແລະ ເທຊະໂລນິກ*

**ການບ້ານບົດທີ 4 ພາກປາຍ**

# ໃນເຮືອນຂອງຢາຊົນ

(ກຈກ 17:5-10)

- *ໃຫ້ອ່ານ ກຈກ 17: 5-10 ແລ້ວຂັ້ນໄວ້*
  *ໃນບົດຮຽນນີ້ໃຫ້ທ່ານສັງເກດ ຈົດໝາຍທີ່ໂປໂລຂຽນຖືກກັບການລາຍງານຂອງລູກາ ໃນພະທຳກິດຈະການ.*

**1** ເມື່ອໂປໂລແລະຊີລາຢູ່ໃນເມືອງເທຊະໂລນິກ ແມ່ນໃຜທີ່ຕ້ອນຮັບເຂົາ? (ກຈກ 17:7)

______________________________________________

**2** ເຮົາຍົກເລື່ອງມາຈາກພະທຳກິດຈະການ ແລ້ວຍົກຄຳຈາກຈົດໝາຍຂອງໂປໂລທີ່ໄປຂຽນເຖິງຄຣິດສະຕະຈັກຕ່າງໆ ມາປະກອບເຂົ້າກັນເພື່ອຈະໄດ້ຮູ້ເລື່ອງຢ່າງລະອຽດ:

ກ. ໃນ 1 ທຊນ 2:9 ເຫັນວ່າໂປໂລເຮັດການຍາມໃດ ເພື່ອບໍ່ໃຫ້ຜູ້ໃດຮັບພາລະອັນໜັກຍ້ອນພວກ ເຂົາ? ______________________________

ຂ. ໃນ 2 ທຊນ 3:8 ໂປໂລບອກວ່າບໍ່ໄດ້ຮັບຫຍັງກັບໃຜ? ______________________

**3** ກ. ໂປໂລຢູ່ໃສເວລາຂຽນຈົດໝາຍເທຊະໂລນິກ? ______________________

ຂ. ໃນບ່ອນນັ້ນໂປໂລເຮັດການຢ່າງໃດລ້ຽງຊີວິດ? (ກຈກ 18:3) __________________

______________________________________________

**4** ໂປໂລແລະໝູ່ຢູ່ໃນເທຊະໂລນິກບໍ່ເຫິງ ດັ່ງນັ້ນອາດຈະບໍ່ມີເວລາຕັ້ງອາຊີບເຮັດຜ້າເຕັ້ນ. ໃນພະທຳ ຟລປ 4:16 ໂປໂລເຫັນວ່າຄຣິດສະຕະຈັກຟີລິບປອຍຝາກຂອງມາຊ່ອຍ ເມື່ອຢູ່ບ່ອນໃດ? ______________________________

**5** ຢ່າງໃດກໍຕາມ ໂປໂລບໍ່ໄດ້ຮັບອາຫານການກິນຈາກເຈົ້າພາບຢາຊົນ.

ກ. ເພິ່ນອາດຈະລ້ຽງຊີວິດໂດຍເຮັດອາຊີບໃດ? ______________________

ຂ. ເພິ່ນໄດ້ຮັບຂອງຈາກຄຣິດສະຕະຈັກໃດ? ______________________

**6** ກ. ໃນ ກຈກ 17:5 ແມ່ນພວກໃດທີ່ຄິດເຫິງສາ? ______________________

ຂ. ເຂົາຄົບຄິດກັບຄົນຢ່າງໃດ? ______________________

ຄ. ເຂົາບຸກລຸກເຮືອນຂອງຢາຊົນ ພະຍາຍາມຈະນຳເອົາໃຜອອກມາໃຫ້ປະຊາຊົນ? ______

______________________________________________

**7** ກ. ຫາເຂົາທັງສອງບໍ່ພົບ ຈຶ່ງລາກເອົາໃຜໄປ? (ກຈກ 17:6) ______________________

______________________________________________

ຂ. ເອົາໄປຫາໃຜ? ______________________________

**8** ກ. ໂປໂລເຄີຍສອນເຂົາໃນເລື່ອງລາຊະອານາຈັກໃດ ໃນ 1 ທຊນ 2:12? ____________

_____________________________________________________________

ຂ. ດັ່ງນັ້ນ ເຂົາຫາຄວາມຕໍ່ຜູ້ປົກຄອງວ່າເຮັດຜິດຕໍ່ຂໍ້ດຳລັດຂອງໃຜ?
(ກຈກ 17:7) ______________________________________________

ຄ. ໂດຍກ່າວວ່າມີກະສັດອີກອົງໜຶ່ງຄືໃຜ? _________________________________

*ເຫັນວ່າຈົດໝາຍຂອງໂປໂລເຂົ້າກັບການບັນທຶກຂອງລູກາໃນພະທຳກິດຈະການ.*

**9** ກ. ໄດ້ຍິນການກ່າວຫານັ້ນແລ້ວ ພວກຢິວເຮັດໃຫ້ປະຊາຊົນກັບພວກຜູ້ປົກຄອງມີໃຈຢ່າງໃດ?
(ກຈກ 17:8) ______________________________________________

ຂ. ເຂົາຕ້ອງເຮັດຢ່າງໃດຈຶ່ງຈະປ່ອຍຢາຊົນແລະຄົນອື່ນ ໆ ໄປໄດ້? _______________

_____________________________________________________________

**10** ກ. ເນື່ອງຈາກການອົນລະຫົນຫວຸ້ນວາຍນັ້ນ ພວກພີ່ນ້ອງຈຶ່ງໃຫ້ໂປໂລກັບຊີລາອອກໄປຍັງ
ບ່ອນໃດ? (ກຈກ 17:10) ________________________________________

ຂ. ໄປໃນເວລາໃດ? ___________________________________________

| ໃຫ້ທ່ານຊອກຫາເມືອງເບຣອຍອາ ໃນແຜນທີ່ໜ້າ 42. |
|---|

**11** ໃຫ້ທ່ານກັບໄປເບິ່ງຮູບ 5 ໃບຢູ່ໜ້າ 7. ຕົວອັກສອນໃດສະແດງເຖິງເວລາໂປໂລຢູ່ໃນ ເມືອງ
ເທຊະໂລນິກ? ______________________________________________

*ຈົ່ງຮັບພິຈາລະນາ ແລະ ອ້ອນວອນ*

- *ໃຫ້ອ່ານ 1 ທຊນ 2:3-13*
  *ອ່ານແລ້ວໃຫ້ທ່ານຄິດເບິ່ງຈະເອົາໂປໂລເປັນຕົວຢ່າງແກ່ທ່ານເອງຢ່າງໃດໄດ້.*

*ຢ່າລືມບົດເສັງ!*

ຄຳຕອບ:

**1** *ຢາຊິນ*

**2** *ກ. ເຮັດການທັງກາງເວັນແລະກາງຄືນ ຄ. ບໍ່ໄດ້ຮັບອາຫານການກິນ*

**3** *ກ. ໂກລິນໂທ ຂ. ເຮັດຜ້າເຕັນ*

**4** *ເມື່ອຢູ່ເທຊະໂລນິກ*

**5** *ກ. ເຮັດຜ້າເຕັນ ຂ. ຟີລິບປອຍ*

**6** *ກ. ຢິວ ຂ. ຄົນພານຕາມຕະຫຼາດ ຄ. ເອົາໂປໂລແລະຊີລາ*

**7** *ກ. ເອົາຢາຊິນກັບພີ່ນ້ອງບາງຄົນ ຂ. ຫາຜູ້ປົກຄອງເມືອງ*

**8** *ກ. ລາຊະອານາຈັກຂອງພະເຈົ້າ ຂ. ຂອງກາຍຊາ ຄ. ເຢຊູ*

**9** *ກ. ຮ້ອນໃຈຂຶ້ນ ຂ. ມີຜູ້ຮັບປະກັນ*

**10** *ກ. ເມືອງເບຣອຍອາ ຂ. ກາງຄືນ*

**11** *ຮູບ ຂ*

**ໃນການປະຊຸມບົດທີ 4**

## ຈົດໝາຍຂອງໂປໂລເຖິງຄຣິດສະຕະຈັກເທຊະໂລນິກ

ເຮົາຈະຮຽນເລື່ອງຈົດໝາຍຂອງໂປໂລທີ່ມີໄປເຖິງຄຣິດສະຕະຈັກໃນເມືອງເທຊະໂລນິກ ແລ້ວຈະຮຽນເລື່ອງຜົນຄຳສອນຂອງໂປໂລໃນເມືອງນັ້ນອີກ.

### ເລື່ອງທີ່ໂປໂລເທດສະໜາໃນເມືອງເທຊະໂລນິກ

**1** ໃນ ກຈກ 17:3 ເຫັນວ່າໂປໂລເທດສະໜາວ່າພະເຢຊູຕ້ອງໄດ້ຮັບຫຍັງແລະຖືກບັນດານຈາກຫຍັງ?

ກ. ______________________________

ຂ. ______________________________




**2** ໂປໂລອອກຈາກແຂວງມາເກໂດເນຍ ໄປແຂວງອະຂາຢາ. ຫຼັງຈາກເຖິງອະຂາຢາເພິ່ນຂຽນຈົດໝາຍກັບໄປຫາຄຣິດສະຕຽນໃນເມືອງເທຊະໂລນິກສອງສະບັບ.

ກ. ຂຽນຈາກເມືອງໃດ? (ເບິ່ງຮູບ) ______________________

ຂ. ຂຽນຮ່ວມກັບໃຜ? (ເບິ່ງ 1 ທຊນ 1:1 ແລະ 2 ທຊນ 1:1) ______________________

______________________________

- *ໝາຍເຫດ: ຊີລາວານເປັນອັນດຽວກັບຊີລາ.*

**3** ຖ້າເຮົາຮຽນຮູ້ເລື່ອງໃນຈົດໝາຍເທຊະໂລນິກທັງສອງສະບັບນັ້ນ ເຮົາກໍຈະຮຽນຮູ້ເລື່ອງທີ່ໂປໂລເທດສະໜາເວລາຍັງຢູ່ກັບເຂົາ ເພາະເພິ່ນອ້າງເຖິງເລື່ອງເຫຼົ່ານັ້ນເປັນບາງເທື່ອ.

ກ. ໂປໂລເຕືອນສະຕິໜຸນໃຈເຂົາໃຫ້ດຳເນີນຊີວິດຢ່າງໃດ? (1 ທຊນ 2:12) __________

______________________________

ຂ. ໃນ 1 ທຊນ 3:3-4 ໂປໂລເຕືອນໃຫ້ເຂົາທົນຫຍັງ? ______________________

ຄ. ໃນ 1 ທຊນ 4:2-8 ໂປໂລສັ່ງໄວ້ຢ່າງໃດ? (ຂໍ້ 3 ເປັນຕົ້ນ) ______________________

______________________________

ງ. 1 ທຊນ 4:11 ບອກໃຫ້ຕັ້ງເປົ້າໝາຍຢູ່ຢ່າງໃດ? ______________________

**4** ຄຳເຕືອນທີ່ໂປໂລຂຽນມານັ້ນ ເປັນຄຳທີ່ເພິ່ນເຄີຍເທດມາກ່ອນ.

ກ. ໃນ 1 ທຊນ 2:12 ໂປໂລໄດ້ເຕືອນສະຕິໜຸນໃຈໃຜມາກ່ອນ? ___________________

ຂ. ໃນ 1 ທຊນ 3:4 ມີຄຳໃດທີ່ສະແດງວ່າເພິ່ນເຄີຍເທດເລື່ອງນັ້ນມາກ່ອນ? ___________

_________________________________________________________________

ຄ. ໃນ 1 ທຊນ 4:2 ມີຄຳໃດທີ່ສະແດງວ່າ ເພິ່ນເຄີຍເທດເລື່ອງນັ້ນມາກ່ອນ? ___________

_________________________________________________________________

ງ. ໃນ 1 ທຊນ 4:6 ມີຄຳໃດ? _____________________________________________

_________________________________________________________________

ຈ. ໃນ 1 ທຊນ 4:11 ມີຄຳໃດ? ____________________________________________

ໃຫ້ທ່ານຂີດກ້ອງຄຳເຫຼົ່ານັ້ນ ແລ້ວຂຽນຄຳວ່າ "ເທດແລ້ວ" ໃສ່ຂອບເຈ້ຍຂ້າງຂໍ້ນັ້ນ

- ຂີດກ້ອງຄຳວ່າ "ໄດ້ເຕືອນສະຕິໜຸນໃຈພວກເຈົ້າ" ໃນ 1 ທຊນ 2:12 ແລ້ວຂຽນ ຄຳວ່າ"ເທດແລ້ວ" ໃສ່ຂ້າງ.
- ຂີດກ້ອງຄຳວ່າ "ເມື່ອໄດ້ຢູ່ນຳເຈົ້າທັງຫຼາຍ ພວກເຮົາໄດ້ບອກເຈົ້າລ່ວງໜ້າໄວ້ແລ້ວ" ໃນ 1 ທຊນ 3:4 ແລ້ວຂຽນ ຄຳວ່າ "ເທດແລ້ວ" ຢູ່ຂ້າງ.
- ຂີດກ້ອງຄຳວ່າ "ທີ່ພວກເຮົາໄດ້ສັ່ງໄວ້ແກ່ພວກເຈົ້າ" ໃນ 1 ທຊນ 4:2 ແລ້ວຂຽນຄຳວ່າ "ເທດແລ້ວ" ຢູ່ຂ້າງ.
- ຂີດກ້ອງຄຳວ່າ "ຕາມດັ່ງພວກເຮົາໄດ້ບອກພວກເຈົ້າຢ່າງໜັກແໜ້ນໄວ້ກ່ອນແລ້ວ" ໃນ 1 ທຊນ 4:6 ແລ້ວຂຽນຄຳວ່າ "ເທດແລ້ວ" ຢູ່ຂ້າງ.
- ຂີດກ້ອງຄຳວ່າ "ຕາມດັ່ງພວກເຮົາໄດ້ສັ່ງເຈົ້າທັງຫຼາຍໄວ້ແລ້ວ" ໃນ 1 ທຊນ 4:11 ແລ້ວຂຽນຄຳວ່າ "ເທດແລ້ວ" ຢູ່ຂ້າງ.

**5** ມີອີກຂໍ້ໜຶ່ງໃນ 2 ທຊນ ທີ່ອ້າງເຖິງເລື່ອງທີ່ໂປໂລເທດສະໜາເມື່ອເວລາຍັງຢູ່ໃນເມືອງເທຊະໂລ ນິກ ຄື 2 ທຊນ 2:5 ໂປໂລຈະໃຫ້ເຂົາຈື່ເລື່ອງທີ່ເພິ່ນສອນໄວ້ກ່ອນຄືເລື່ອງໃດ? (ໃຫ້ເບິ່ງ 2 ທຊນ 2:1) _____________________________________________________

ໃຫ້ທ່ານຂີດກ້ອງ 2 ທຊນ 2:5 ທັງຂໍ້ ແລ້ວຂຽນຄຳວ່າ "ເທດແລ້ວ" ຂ້າງຂໍ້ນັ້ນ.

*ຖ້າເຮົາຢາກຮູ້ເລື່ອງທີ່ໂປໂລເທດສະໜາເມື່ອຢູ່ກັບເຂົາໃນເມືອງເທຊະໂລນິກ ເຮົາຫາໄດ້ ໃນພະທຳກິດຈະການແລະຈົດໝາຍຂອງໂປໂລ. ເພິ່ນເຄີຍເທດສະໜາເລື່ອງສອງປະການຄື:*

- *ຫຼັກຄຳສອນເລື່ອງພະເຢຊູ*
- *ຊີວິດຄຣິດສະຕຽນ*

**6** ໂປໂລສອນເລື່ອງພະເຍຊູ

ກ. ໃນ ກຈກ 17:3 ໂປໂລສອນຢ່າງໃດກ່ຽວກັບພະເຍຊູ? ______________________

______________________________________________________

ຂ. ໃນ 2 ທຊນ 2:1-5 ໂປໂລສອນຢ່າງໃດກ່ຽວກັບພະເຍຊູ? ____________________

______________________________________________________

**7** ໂປໂລສອນເລື່ອງຊີວິດຄຣິດສະຕຽນ.

ກ. ໃນ 1 ທຊນ 3:3-4 ຖ້າຖືກການຍາກລຳບາກເຮົາຮູ້ຢູ່ແລ້ວວ່າ ການລຳບາກນັ້ນມາຍ້ອນຫຍັງ? ______________________________________________________

ຂ. ໃນ 1 ທຊນ 4:3 ແລະ 7 ພະເຈົ້າບໍ່ໃຫ້ເຮົາຜິດຊາຍຍິງ ແຕ່ຈະໃຫ້ຢູ່ເປັນຄົນຢ່າງໃດ?

______________________________________________________

ຄ. ໃນ 1 ທຊນ 4:4 ຈະໃຫ້ມີເມຍໃນທາງໃດ? ____________________________

ງ. ໃນ 1 ທຊນ 4:11 ໃຫ້ຕັ້ງເປົ້າໝາຍຈະຢູ່ຢ່າງໃດ? _________________________

ຈ. ໃນ 1 ທຊນ 2:12 ໃຫ້ດຳເນີນຊີວິດຕາມຢ່າງໃດ? _________________________

## ເຫດທີ່ໂປໂລເທດສະໜາໃນເມືອງເທຊະໂລນິກ

**8** ໃນ1 ທຊນ 2:4 ໂປໂລສອນເພື່ອຫຍັງ? ________________________________

*ໂປໂລເທດສະໜາເພື່ອຈຸດໝາຍປາຍທາງປະການດຽວ ຄືໃຫ້ຊອບພະໄທພະເຈົ້າບໍ່ແມ່ນເພື່ອຈະຊອບໃຈມະນຸດ. ໃນທຸກວັນນີ້ມີນັກເທດບາງຄົນທີ່ຢາກເທດໃຫ້ຊອບໃຈມະນຸດ ແລ້ວເຂົາກໍຫຼົງຜິດໄປໃນຫຼາຍດ້ານ.*

**9** ໃຫ້ອ່ານ 1 ທຊນ 2:3-7

ກ. ຂໍ້ໃດອ້າງເຖິງຄົນທີ່ເທດສະໜາໂດຍກົນອຸບາຍ? _________________________

ຂ. ຂໍ້ໃດກ່າວເຖິງຄົນທີ່ຢາກເທດໃຫ້ຊອບໃຈມະນຸດ? ________________________

ຄ. ຂໍ້ໃດກ່າວເລື່ອງນັກເທດທີ່ຍ້ອງຍໍຄົນ? ________________________________

ງ. ຂໍ້ໃດກ່າວເຖິງນັກເທດທີ່ຢາກໄດ້? ___________________________________

ຈ. ຂໍ້ໃດກ່າວເຖິງຄົນຢາກໄດ້ກຽດຕິຍົດຈາກມະນຸດ? _________________________

**10** ຖ້າເຮົາຈະຫຼີກເວັ້ນຈາກຄວາມຜິດຢ່າງນັ້ນ ຈະປະກາດຂ່າວປະເສີດຢ່າງໃດ? (1 ທຊນ 1:5) ________________________________________________

## ການດຳເນີນຊີວິດຂອງໂປໂລໃນເມືອງເທຊະໂລນິກ

**11** ແນ່ນອນວ່າໂປໂລບໍ່ໄດ້ປະກາດພະທຳເພື່ອໄດ້ປະໂຫຍດສ່ວນຕົວ ທັງບໍ່ໄດ້ໃຊ້ອຸບາຍຢ່າງໃດ (1 ທຊນ 2:5). ໂປໂລເຮັດຫຍັງຈຶ່ງຈະບໍ່ເປັນພາລະໜັກແກ່ພີ່ນ້ອງ? (1 ທຊນ 2:9)

______________________________________________________

**12** ໂປໂລບໍ່ໄດ້ໜ້າອາຍເລື່ອງການເທດສະໜາຂອງຕົນເອງ, ເພາະເພິ່ນດຳເນີນຊີວິດຖືກຕາມຄວາມທີ່ ເພິ່ນເທດສະໜານັ້ນ.

ກ. ໃນ 1 ທຊນ 2:5 ໂປໂລຈະເອົາໃຜເປັນພະຍານເລື່ອງການດຳເນີນຊີວິດ? __________

ຂ. ໃນ 1 ທຊນ 2:10 ໂປໂລເອົາທັງພະເຈົ້າທັງພີ່ນ້ອງຄຣິດສະຕຽນ ເພິ່ນປະຕິບັດຕົນຢ່າງໃດ?

____________________________________________________

ຄ. ໃນ 1 ທຊນ 2:7 ໂປໂລຢູ່ຖ້າມກາງເຂົາ ເໝືອນຢ່າງໃຜທີ່ລ້ຽງລູກນ້ອຍ? ___________

ງ. ໃນ 1 ທຊນ 2:11 ໂປໂລເຮັດນຳເຂົາເໝືອນໃຜເຮັດກັບລູກຂອງຕົນ? ____________

**13** ໂປໂລບໍ່ໄດ້ເທດສະໜາເພື່ອໃຫ້ພີ່ນ້ອງຮັບໃຊ້ເພິ່ນ ແຕ່ໂປໂລຈະຮັບໃຊ້ພີ່ນ້ອງ.

ໃນ 1 ທຊນ 5:14-25 ໂປໂລຈັດອຸດົມຄະຕິໃຫ້ພີ່ນ້ອງ. ໂປໂລຈະດຳເນີນຊີວິດຕາມແບບນັ້ນກ່ອນ ຈຶ່ງຈະເປັນ ຕົວຢ່າງຕໍ່ຄົນອື່ນໄດ້.

ກ. ຈົ່ງເຕືອນສະຕິຄົນຢ່າງໃດ? (1 ທຊນ 5:14) ____________________________

ຂ. ຈົ່ງຊູໃຈຄົນຢ່າງໃດ? (1 ທຊນ 5:14) ________________________________

ຄ. ຈົ່ງຊ່ອຍເຫຼືອຄົນຢ່າງໃດ? (1 ທຊນ 5:14) ______________________________

ງ. ຈົ່ງອົດທົນຕໍ່ຄົນຢ່າງໃດ? (1 ທຊນ 5:14) ______________________________

ຈ. ຈົ່ງລະວັງຢ່າໃຫ້ຜູ້ໃດເຮັດຊົ່ວຕອບແທນຫຍັງ? (1 ທຊນ 5:15) _______________

ສ. ຈົ່ງສະແຫວງຫາທາງເຮັດຢ່າງໃດຕໍ່ກັນແລະກັນຢູ່ສະເໝີ? (1 ທຊນ 5:15) _________

ຊ. ຈົ່ງຊົມຊື່ນຍິນດີຢ່າງໃດ? (1 ທຊນ 5:16) ______________________________

ຍ. ຈົ່ງອ້ອນວອນຢ່າງໃດ? (1 ທຊນ 5:17) ________________________________

ດ. ຈົ່ງຂອບພະຄຸນໃນສິ່ງໃດ? (1 ທຊນ 5:18) _____________________________

ຕ. ຢ່າຫັກຫ້າມໃຜ? (1 ທຊນ 5:19) ____________________________________

ຖ. ຢ່າປະໝາດຫຍັງ? (1 ທຊນ 5:20) ___________________________________

ທ. ຈົ່ງທົດລອງເບິ່ງທຸກສິ່ງແລະຍຶດຖືສິ່ງໃດໄວ້ໃຫ້ໝັ້ນ? (1 ທຊນ 5:21) ____________

ນ. ຈົ່ງເວັ້ນຈາກຫຍັງ? (1 ທຊນ 5:22) ___________________________________

ບ. ຈົ່ງຮັກສາວິນຍານ ຈິດໃຈ ແລະກາຍໄວ້ຢ່າງໃດ? (1 ທຊນ 5:23) ______________

ປ. ໃນ 1 ທຊນ 5:25 ຈົ່ງເຮັດຫຍັງ? _____________________________________

*ໂປໂລຕັກເຕືອນພີ່ນ້ອງເຮັດຢ່າງໃດ ແລ້ວໂປໂລເອງດຳເນີນຊີວິດຢ່າງນັ້ນກ່ອນ!*

## ຜົນຮັບໃນຄຣິດສະຕະຈັກເທຊະໂລນິກ

**14** ໂປໂລເທດສະໜາໂດຍມີອຳນາດຂອງພະວິນຍານບໍລິສຸດ ແລ້ວໂປໂລດຳເນີນຊີວິດຢ່າງຖືກຕ້ອງ ຈຶ່ງບໍ່ມີໃຜຈະຕິຕຽນໄດ້. ເມື່ອພີ່ນ້ອງໄດ້ຮັບເອົາພະທຳຂອງພະເຈົ້າໄດ້ຍິນຈາກໂປໂລຢ່າງໃດ? (1 ທຊນ 2:13) ____________________________________________

**15** ໃຫ້ອ່ານ 1 ທຊນ 1:6-8 ພວກພີ່ນ້ອງເທຊະໂລນິກຮັບເຊື່ອພະທຳຂອງພະເຈົ້າ.

ກ. ກາຍເປັນຜູ້ເອົາຕາມແບບຢ່າງຂອງໃຜ? (ຂໍ້ 6) ____________________________

ຂ. ເຂົາຮັບພະທຳຢ່າງໃດ? ____________________________________________

ຄ. ຮັບວ່າພະທຳນັ້ນມາຈາກໃຜ? ________________________________________

ງ. ພີ່ນ້ອງໃນເທຊະໂລນິກກາຍເປັນແບບຢ່າງແກ່ຄົນໃນສອງແຂວງໃດ? (ຂໍ້ 7) ________

____________________________________________________________

ຈ. ຄວາມເຊື່ອຂອງເຂົາຊ່າລືອອກໄປເຖິງໃສ? (ຂໍ້ 8) __________________________

ສ. ຄຣິດສະຕຽນເຮົາໃນສະໄໝນີ້ມີຊື່ສຽງເຖິງປານນັ້ນບໍ່? ________________________

*ໃຫ້ຄົນໜຶ່ງອ່ານ ຈາກພະທຳຕໍ່ໄປນີ້:*

- *1 ທຊນ 1:3 ແລະ ຂໍ້ 9-10*
- *1 ທຊນ 5:23-24*

*ແລ້ວອ້ອນວອນຮ່ວມຕາມຂໍ້ພະຄຳພີເຫຼົ່ານັ້ນ*

*ຢ່າລືມບົດເສັງ!*

ຄຳຕອບ:

**1** *ກ. ຕ້ອງທົນທຸກທໍລະມານ ຂ. ຖືກບັນດານໃຫ້ເປັນຄືນມາຈາກຄວາມຕາຍ*

**2** *ກ. ໂກລົນໂທ ຂ. ຊີລາວານ ແລະ ຕີໂມທຽວ*

**3** *ກ. ຕາມຢ່າງສົມຄວນຕໍ່ພະເຈົ້າ ຂ. ທົນການລຳບາກ*

*ຄ. ໃຫ້ເປັນຄົນບໍລິສຸດລະເວັ້ນຈາກການຜິດຊາຍຍິງ ງ. ສະຫງົບ*

**4** *ກ. ຊາວເທຊະໂລນິກ*

*ຂ. ຄຳວ່າ "ເມື່ອໄດ້ຢູ່ນຳເຈົ້າທັງຫຼາຍ ພວກເຮົາໄດ້ບອກເຈົ້າລ່ວງໜ້າໄວ້ແລ້ວ".*

*ຄ. ຄຳວ່າ "ທີ່ພວກເຮົາໄດ້ສັ່ງໄວ້ແກ່ພວກເຈົ້າ".*

*ງ. "ຕາມດັ່ງພວກເຮົາໄດ້ບອກພວກເຈົ້າຢ່າງໜັກແໜ້ນໄວ້ກ່ອນແລ້ວ".*

*ຈ. "ຕາມດັ່ງພວກເຮົາໄດ້ສັ່ງເຈົ້າທັງຫຼາຍໄວ້ແລ້ວ".*

**5** *ການທີ່ພະເຢຊູຈະສະເດັດມາອີກ.*

**6** *ກ. ເປັນພະຄຣິດທີ່ຕ້ອງທົນທຸກທໍລະມານ ແລ້ວຖືກບັນດານໃຫ້ເປັນຄືນມາອີກ.*

*ຂ. ເລື່ອງການສະເດັດມາອີກຂອງພະອົງ*

**7** *ກ. ຊົງກຳນົດໄວ້ແລ້ວ ຂ. ຄົນບໍລິສຸດ ຄ. ບໍລິສຸດແລະນັບຖື*

*ງ. ຢ່າງສະຫງົບ ຈ. ສົມຄວນຕໍ່ພະເຈົ້າ*

**8** *ເພື່ອໃຫ້ຊອບພະໄທພະເຈົ້າ*

**9** *ກ. ຂໍ້ 3 ຂ. ຂໍ້ 4 ຄ. ຂໍ້ 5 ງ. ຂໍ້ 5 ຈ. ຂໍ້ 6*

**10** *ໃຫ້ເທດດ້ວຍລິດອຳນາດກັບທັງພະວິນຍານບໍລິສຸດ*

**11** *ເຮັດການທັງກາງເວັນແລະກາງຄືນ*

**12** *ກ. ພະເຈົ້າ ຂ. ບໍລິສຸດ ທ່ຽງທຳ ແລະບໍ່ມີຂໍ້ຕິຕຽນ ຄ. ເໝືອນແມ່ ງ. ພໍ່*

**13** *ກ. ຄົນທີ່ບໍ່ຢູ່ໃນລະບຽບ ຂ. ຄົນທີ່ນ້ອຍໃຈ ຄ. ຄົນທີ່ອ່ອນກຳລັງ ງ. ຄົນທັງປວງ*

*ຈ. ການຊົ່ວ ສ. ເຮັດດີ ຊ. ຢູ່ສະເໝີ ຍ. ອ້ອນວອນບໍ່ຂາດ*

*ດ. ໃນທຸກສິ່ງ ຕ. ພະວິນຍານ ຖ. ຄຳທຳນວາຍ ທ. ສິ່ງດີ*

*ນ. ຈາກຄວາມຊົ່ວທຸກຊະນິດ ບ. ບໍ່ໃຫ້ມີຂໍ້ຕິຕຽນໄດ້ ປ. ຈົ່ງອ້ອນວອນ*

**14** *ບໍ່ໄດ້ຮັບເອົາຢ່າງເປັນຂໍ້ຄວາມຂອງມະນຸດ ແຕ່ຮັບວ່າເປັນພະທຳຂອງພະເຈົ້າ*

**15** *ກ. ຂອງໂປໂລ ແລະພະຜູ້ເປັນເຈົ້າ ຂ. ດ້ວຍຄວາມຊົມຊື່ນຍິນດີ*

*ຄ. ພະວິນຍານບໍລິສຸດ ງ. ແຂວງມາເກໂດເນຍ ແລະ ແຂວງອະຂາຢາ*

*ຈ. ທົ່ວທຸກແຫ່ງຫົນ ສ. (ຕອບບໍ່ຕາຍຕົວ)*